ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ

8789---ກ

ເລກທີ............../ພຊສ.ນວ

ວັນທີ........09 SEP 2024....

ຂາເຂົ້າ | ສໍານັກງານອົງການປົກຄອງ ນວ | ໜ່ວຍງານບໍລິການປະຕູດຽວ
ເລກທີ:.......4132.....
ວັນທີ:...10..9..24...

# ບົດລາຍງານ

**ຮຽນ:** ທ່ານ ສິລິລາດທົງສິນ ທອງເພັງ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ທີ່ນັບຖື
ທ່ານ ຫົວໜ້າພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ທີ່ນັບຖື

**ເລື່ອງ:** ຂໍລາຍງານການສຶກສາ, ສໍາຫຼວດ-ອອກແບບ ຄວາມເປັນໄປໄດ້ ໃນການລົງທຶນ ພັດທະນາທີ່ດິນ ບ້ານ ດອນກາງຂອງ, ເມືອງ ສັງທອງ, ນະຄອນຫຼວງວຽງຈັນ.

- ອີງຕາມ ຕາມມາດຕາ 153, 154 ຂອງກົດໝາຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 1097/ຈນວ ລົງວັນທີ 21 ທັນວາ 2022, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມນະຄອນຫລວງວຽງຈັນ;
- ອີງຕາມ ຂໍ້ຕົກລົງຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ: 593/ຈນວ, ລົງວັນທີ 07 ມິຖຸນາ 2023; ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ລົງສຶກສາ. ສໍາຫຼວດ-ອອກແບບ ຄວາມເປັນໄປໄດ້ ໃນການລົງທຶນ ພັດທະນາທີ່ດິນ ດອນກາງຂອງ, ເມືອງ ສັງທອງ, ນະຄອນຫຼວງວຽງຈັນ;
- ອີງຕາມ ບົດລາຍບັນທຶກຄວາມເຂົ້າໃຈ MOU ສະບັບລົງວັນທີ 02 ມິຖຸນາ 2023 ວ່າດ້ວຍ ການສຶກສາ,ສໍາຫຼວດ-ອອກແບບ ຄວາມເປັນໄປໄດ້ ໃນການລົງທຶນ ພັດທະນາທີ່ດິນ ດອນກາງຂອງ, ເມືອງ ສັງທອງ, ນະຄອນຫຼວງວຽງຈັນ;
- ອີງຕາມ ບົດລາຍງານຂອງພະແນກແຜນການ ແລະ ການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນນະຄອນຫຼວງວຽງຈັນ ສະບັບເລກທີ 485/ພຜທ.ຫລປ.ນວ, ລົງວັນທີ 23 ພຶດສະພາ 2023;
- ອີງຕາມ ຂໍ້ຕົກລົງ(ເພີ່ມເຕີມ) ສະບັບເລກທີ 7255/ພຊສ.ນວ,ລົງວັນທີ 22 ສິງຫາ 2023;

## I. ສະພາບລວມ:

ບ້ານ ດອນກາງຂອງ, ເມືອງ ສັງທອງ, ນະຄອນຫຼວງວຽງຈັນ ໄດ້ສ້າງຕັ້ງຂື້ນໃນປີ 1993 ເປັນຕົ້ນມາ, ໃນປະຈຸບັນມີພົນລະເມືອງ ທັງໝົດ 506 ຄົນ, ຍິງ 276 ຄົນ, ມີຄອບຄົວທັງໝົດ 106 ຄອບຄົວ, ເຊິ່ງເປັນຊົນເຜົ່າລາວລຸ່ມທັງໝົດ ການປະກອບອາຊີບທໍາມາຫາກິນ ເປັນຊາວກະສິກອນ ປູກຝັງ ລ້ຽງສັດ, ເຮັດນາ, ສວນກ້ວຍ, ສາລີ, ມັນຕົ້ນ, ພືດລົ້ມລຸກຕາມລະດູການ, ສວນຍາງ ແລະ ມີຈໍານວນໜຶ່ງເປັນພະນັກງານລັດ, ພະນັກງານເອກະຊົນ, ກໍາມະກອນຢູ່ທັງພາຍໃນ ແລະ ຕ່າງປະເທດ.

ໂຄງການ Dream Land Lao ທີ່ຈະໄດ້ຮັບການພັດທະນາຂື້ນໂດຍ ບໍລິສັດ ເຊວຈິນ ວິສາວະກໍາ ແລະ ກໍ່ສ້າງ ຈໍາກັດ (SEAC) ແມ່ນຕັ້ງຢູ່ດອນກາງຂອງ ເຊິ່ງຂື້ນກັບບ້ານດອນກາງຂອງ ເມືອງສັງທອງ ນະຄອນຫຼວງວຽງຈັນ, ຫ່າງຈາກຕົວເມືອງນະຄອນຫຼວງວຽງຈັນ ປະມານ 70 ກິໂລແມັດ, ດອນດັ່ງກ່າວ ມີເນື້ອທີ່ລວມທັງໝົດປະມານ 450 ເຮັກຕາ. ໃນປະຈຸບັນການຂ້າມໄປຫາດອນດັ່ງກ່າວ ແມ່ນນໍາໃຊ້ເຮືອໂດຍສານຂອງປະຊາຊົນ ເຊິ່ງມີທ່າເຮືອຢູ່ບ້ານປາກຕອນ (ຄວາມກ້ວາງຂອງນໍ້າຂອງເຂດທ່າເຮືອບ້ານປາກຕອນ ໄປຫາດອນກາງຂອງ ປະມານ 230 ແມັດ). ເສັ້ນທາງຈາກ

ທ່ານ້ຳຂອງດອນເບື້ອງຂ້າມຈາກບ້ານປາກຕອນ ໄປເສັ້ນທາງທີ່ປະຊາຊົນນຳໃຊ້ໄປຫາບ້ານ ດອນກາງຂອງ ເຊິ່ງຢູ່ແຄມຂອງອີກເບື້ອງໜຶ່ງຂອງດອນດັ່ງກ່າວ ມີໄລຍະທາງປະມານ 2 ກິໂລແມັດ;

## I. ການຈັດຕັ້ງປະຕິບັດ.

ພາຍຫຼັງທີ່ຄະນະກຳມະການຂັ້ນນະຄອນຫຼວງ, ຂັ້ນເມືອງ ອົງການປົກຄອງບ້ານ ບໍລິສັດຜູ້ພັດທະນາໂຄງການ ໄດ້ລົງເຜີຍແຜ່ເອກະສານ, ຂໍ້ຕົກລົງ, ບັນດານິຕິກຳ ທີ່ກ່ຽວຂ້ອງ ພ້ອມທັງສະເໜີແຜນພັດທະນາໂຄງການດັ່ງກ່າວໃຫ້ປະຊາຊົນບ້ານດອນກາງຂອງ ແລະ ປະຊາຊົນຜູ້ທີ່ນຳໃຊ້ທີ່ດິນ ໃນຂອບເຂດດອນກາງຂອງໄດ້ຮັບຮູ້ ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການລົງສຳຫຼວດ ເກັບກຳຂໍ້ມູນ ຜົນກະທົບ ຕ່າງໆເຊັ່ນ: ຂໍ້ມູນການນຳໃຊ້ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ການພັດທະນາອື່ນໆສາມາດສັງລວມຂໍ້ມູນ ດັ່ງລຸ່ມນີ້:

1. ຂໍ້ມູນຕອນດິນ.(ລາຍລະອຽດມີຕາຕະລາງຕິດຂັດ)

- ຈຳນວນຕອນດິນທີ່ຖືກຜົນກະທົບທັງໝົດ: 394 ຕອນ, ເນື້ອທີ່: 4.529.004 ຕາແມັດ.
- ເຮັດບົດບັນທຶກເກັບກຳຂໍ້ມູນໄດ້: 386 ຕອນ, ເນື້ອທີ່: 4.442.136 ຕາແມັດ.
- ຍັງຄ້າງບໍ່ສາມາດເຮັດບົດບັນທຶກໄດ້: 08 ຕອນ: ເນື້ອທີ່: 86.868 ຕາແມັດ.

2. ໃຈ້ແຍກການນຳໃຊ້ທີ່ດິນ 8 ປະເພດ.(ລາຍລະອຽດມີຕາຕະລາງຕິດຂັດ)

- ທີ່ດິນປຸກສ້າງຈຳນວນ: 122 ຕອນ, ເນື້ອທີ່: 94.261 ຕາແມັດ.
- ທີ່ດິນກະສິກຳຈຳນວນ: 269 ຕອນ, ເນື້ອທີ່: 4.237.857 ຕາແມັດ.
- ທີ່ດິນວັດທະນະທຳ(ວັດ+ປ່າຊ້າ) ຈຳນວນ: 02 ຕອນ, ເນື້ອທີ່: 148.367 ຕາແມັດ.
- ທີ່ດິນ ປກສ-ປກຊ ຈຳນວນ: 01 ຕອນ, ເນື້ອທີ່: 12.519 ຕາແມັດ.
- ທີ່ດິນບໍລິເວນນ້ຳ(ສາຍຫ້ວຍ, ຮ່ອງນ້ຳ) ເນື້ອທີ່: 2.566 ຕາແມັດ.
- ທີ່ດິນຄົມມະນາຄົມ(ເສັ້ນທາງ,ທາງຮ່ອມ) ເນື້ອທີ່: 32.732 ຕາແມັດ.
- ທີ່ດິນປ່າໄມ້ ຈຳນວນ: 0 ຕອນ, ເນື້ອທີ່: 0 ຕາແມັດ.
- ທີ່ດິນອຸດສາຫະກຳ ຈຳນວນ: 0 ຕອນ, ເນື້ອທີ່: 0 ຕາແມັດ.

3. ຂໍ້ມູນ ສິ່ງປຸກສ້າງ.(ລາຍລະອຽດມີຕາຕະລາງຕິດຂັດ)

- ເຮືອນກໍ່ຊັ້ນດຽວ ຈຳນວນ: 85 ຫຼັງ
- ເຮືອນກໍ່ສອງຊັ້ນ(ເຮືອນກໍ່ເຄິ່ງໄມ້) ຈຳນວນ: 27 ຫຼັງ
- ເຮືອນຫ້ອງແຖວ ຈຳນວນ: 2 ຫຼັງ
- ເຮືອນໄມ້: 2 ຫຼັງ.
- ເຮືອນຄົວນອກ: 24 ຫຼັງ.
- ຫ້ອງນ້ຳນອກ: 20 ຫຼັງ.
- ສາງ, ຄອກລົດ: 13 ຫຼັງ.
- ຕູບ,ຖຽງນາ, ສາລາ, ເທີບ ຈຳນວນ: 142 ຫຼັງ
- ຄອກສັດ: 34 ຫຼັງ
- ເຫຼົ້າເຂົ້າ: 8 ຫຼັງ.
- ໂຮງສີ: 1 ຫຼັງ.
- ເສົາປູນ + ຕາໜ່າງໝາກກອກ + ໜາມໝາກຈັບ: 360 ກໍລະນີ
- ຮົ້ວໄມ້ແກ່ນຫຼ້ອມ: 153 ກໍລະນີ
- ນ້ຳສ້າງ,ບາດານ : 16 ບໍ່.

4. ຂໍ້ມູນດ້ານກະສິກຳ.(ລາຍລະອຽດມີຕາຕະລາງຕິດຂັດ)

- ນາ ຈຳນວນ: 586.249 ຕາແມັດ.
- ຕົ້ນໄມ້ອຸດສາຫະກຳ ຈຳນວນ: 24.390 ຕົ້ນ.
- ໄມ້ໃຫ້ໝາກ ຈຳນວນ: 16.901 ຕົ້ນ.
- ໄມ້ປ່ອງ ຈຳນວນ: 1.386 ສຸມ.
- ພືດສວນ, ພືດລົ້ມລຸກ ຈຳນວນ:2.370 ສຸມ
- ໜອງປາ: 45.113 ຕາແມັດ.

5. ສັງລວມມູນຄ່າທົດແທນຄ່າເສຍຫາຍໂຄງການ.

- ມູນຄ່າທົດແທນຄ່າເສຍຫາຍ ການພັດທະນາທີ່ດິນ: 9,058,008,000 ກີບ.
- ມູນຄ່າທົດແທນຄ່າເສຍຫາຍ ຜົນລະປູກ: ................................ກີບ
- ມູນຄ່າທົດແທນຄ່າເສຍຫາຍ ສິ່ງປູກສ້າງ: ................................ກີບ
- ລວມມູນຄ່າທັງໝົດ:................................ກີບ

  (...............................................................................)

III. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ:

1. ຂໍ້ສະດວກ:

- ການນຳຈາກທ້ອງຖິ່ນຂັ້ນນະຄອນຫຼວງ, ຂັ້ນເມືອງ ແລະ ອົງການປົກຄອງບ້ານ ໄດ້ມີຄວາມເອົາໃຈໃສ່ສູງໃນການຊີ້ນຳ - ນຳພາ ການລົງເຜີຍແຜ່ເຮັດວຽກການເມືອງແນວຄິດ ລົງເກັບກຳຂໍ້ມູນເນື້ອທີ່ດິນ, ສິ່ງປູກສ້າງ ແລະ ຜົນລະປູກ ເພື່ອສຶກສາຄວາມເປັນໄປໄດ້ຂອງໂຄງການ ພັດທະນາເມືອງດອນກາງຂອງ
- ອົງການປົກຄອງບ້ານທຸກພາກສ່ວນ ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ດ້ານສະຖານທີ່ ແລະ ເຂົ້າຮ່ວມນຳພາ ເດີນສຳຫລວດ ລົງແຕ່ລະຕອນດິນຢ່າງປົກກະຕິ ແລະ ມີຄວາມຮັບຜິດຊອບສູງ;
- ຄະນະກຳມະການ, ກອງເລຂາຊ່ວຍວຽກ ໄດ້ໃຫ້ຄວາມຮ່ວມມືກັນຢ່າງກົມກຽວຕໍ່ກັບການປະສານງານ ທີ່ມີຄວາມຮັບຜິດຊອບສູງໃນການກະກຽມບັນດາເອກະສານ, ນິຕິກຳທີ່ກ່ຽວຂ້ອງ, ການສະຫຼຸບສັງລວມຂໍ້ມູນ ແລະ ການສະໜອງປະກອນພາກສະໜາມໃຫ້ແຕ່ລະທີມງານໄດ້ຢ່າງວ່ອງໄວ ແລະ ທັນເວລາ;
- ຜູ້ພັດທະນາໂຄງການ ມີຄວາມຕັ້ງໃຈຕໍ່ການພັດທະນາ, ມີຄວາມພ້ອມທາງດ້ານທຶນຮອນ ແລະ ມີຄວາມຮັບຜິດຊອບສູງ ຕໍ່ກັບການລົງເກັບກຳຂໍ້ມູນຂອງໂຄງການໃນຄັ້ງນີ້.

2. ຂໍ້ຫຍຸ້ງຍາກ:

- ທີ່ຕັ້ງພູມສັນຖານຂອງໂຄງການແມ່ນຫ່າງຈາກນະຄອນຫຼວງ, ເຂດຕົວເມືອງ ແລະ ຕ້ອງໄດ້ຂ້າມນ້ຳຂອງໃນການລົງສຳຫຼວດເກັບກຳຂໍ້ມູນ ເຮັດໃຫ້ວຽກງານເກີດຄວາມຊັກຊ້າ.
- ໃນໄລຍະເດີນສຳຫຼວດ ແມ່ນຖືກຊ່ວງລະດູຝົນ, ມີຝົນຕົກໜັກໃນບາງມື້ເຮັດໃຫ້ຂາດຄວາມຕໍ່ເນື່ອງ ແລະ ຫຍຸ້ງຍາກໃນການເດີນສຳຫຼວດ ພາກສະໜາມ
- ຄະນະກຳມະການ ແລະ ການຈັດຕັ້ງບ້ານ ຍັງມີຄວາມຫຍຸ້ງຍາກໃນການພົວພັນກັບປະຊາຊົນ ຜູ້ຄຸ້ມຄອງ, ນຳໃຊ້ຕອນດິນ, ເນື່ອງຈາກວ່າ ເຈົ້າຂອງສິດນຳໃຊ້ທີ່ດິນສ່ວນຫຼາຍບໍ່ແມ່ນຄົນໃນພື້ນທີ່ (ເປັນຄົນເຂດອື່ນ), ມີບາງຕອນດິນບໍ່ຮູ້ເຈົ້າຂອງຕອນດິນ ແລະ ບໍ່ສາມາດຕິດຕໍ່ໄດ້.

IV. ທັດສະນະ ແລະ ພາກສະເໜີ

1. ໂດຍພື້ນຖານແມ່ນເຫັນດີໃນການພັດທະນາໂຄງການດອນກາງຂອງຕາມແຜນກິດຈະກຳໂຄງການ ເພື່ອເປັນສ້າງວຽກເຮັດງານທຳ, ສ້າງເສດຖະກິດແບບມີສ່ວນຮ່ວມໃຫ້ປະຊາຊົນບ້ານ ດອນກາງຂອງ ແລະ ບ້ານໃກ້ຄຽງ, ເປັນການດຶງດູດເມັດເງິນການລົງທຶນມາສູ່ທ້ອງຖິ່ນ.

2. ປະຊາຊົນ, ອົງການປົກຄອງບ້ານສະເໜີກ່ຽວກັບການທົດແທນ, ຊົດເຊີຍທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ການພັດທະນາອື່ນໆ ແມ່ນໃຫ້ມີຄວາມສົມເຫດສົມຜົນ, ຈັດສັນພື້ນທີ່ຢູ່ອາໄສ ແລະ ພື້ນທີ່ທຳການຜະລິດໃຫ້ເໝາະສົມມີຄວາມເອກະພາບ, ສາມາດຮັບປະກັນຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ.
3. ຂໍ້ມູນການເກັບກຳຂໍ້ມູນຂ້າງເທິງນີ້ ເປັນການລົງເກັບກຳຂໍ້ມູນ ຜົນກະທົບສິ່ງກີດຂວາງຕ່າງໆ ເພື່ອອອກແບບສຶກສາຄວາມເປັນໄປໄດ້ໃນການລົງທຶນພັດທະນາໂຄງການ, ເຊິ່ງພື້ນທີ່ບ້ານ ດອນກາງຂອງ ແມ່ນເປັນພື້ນທີ່ເກາະດອນນອນຢູ່ກາງແມ່ນ້ຳຂອງເຊິ່ງເປັນທີ່ດິນບໍລິເວນນ້ຳເປັນເຂດຍຸດທະສາດປ້ອງກັນຊາຍແດນທີ່ຂຶ້ນກັບກະຊວງປ້ອງກັນປະເທດ, ສະນັ້ນໃນການຂໍເຊັນສັນຍາພັດທະນາໂຄງການກັບລັດຖະບານ ທາງບໍລິສັດຜູ້ພັດທະນາໂຄງການຕ້ອງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຄົບຖ້ວນ.
4. ການກຳນົດລາຄາຫົວໜ່ວຍທົດແທນ ສິ່ງກີດຂວາງ ສິດນຳໃຊ້ທີ່ດິນ ແມ່ນປະຕິບັດຕາມມາດຕາ 109, 110, 153, 154 ຂອງກົດໝາຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019; ແລະ ຄຳແນະນຳຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 0040/ກຊສ, ລົງວັນທີ 12 ມັງກອນ 2023 ວ່າດ້ວຍການປະເມີນລາຄາທີ່ດິນ, ຫຼັກການ, ວິທີການປະເມີນລາຄາທີ່ດິນ. ເຊິ່ງພື້ນທີ່ໂຄງການດັ່ງກ່າວແມ່ນເປັນດິນລັດຜ່ານມາພາກລັດບໍ່ອະນຸຍາດໃຫ້ອອກສິດນຳໃຊ້ທີ່ດິນ(ໃບຕາດິນ)ໃຫ້ແກ່ພາກສ່ວນໃດເທື່ອ.
5. ການກຳນົດຫົວໜ່ວຍລາຄາທົດແທນການພັດທະນາທີ່ດິນ ຄະນະກຳມະການເຫັນດີເອກະພາບນຳໃຊ້ຫຼັກການ, ຮູບແບບວິທີການກຳນົດແບບດຽວກັບໂຄງການພັດທະນາດອນໜາກໂມ ເປັນບ່ອນອີງພື້ນຖານໃນການຄິດໄລ່ມູນຄ່າທົດແທນການພັດທະນາທີ່ດິນ, ໃນການຄິດໄລ່ມູນຄ່າທົດແທນຄ່າເສຍຜົນລະປູກແມ່ນອີງຕາມໜັງສືຢັ້ງຢືນລາຄາທົດແທນຄ່າເສຍຫາຍຜົນລະປູກ ຂອງພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນໄດ້ ສະບັບເລກທີ: 2950/ກປ.ນວ, ລົງວັນທີ 14 /06/2024. ການຄິດໄລ່ມູນຄ່າທົດແທນຄ່າເສຍສິ່ງປຸກສ້າງແມ່ນອີງໃສ່ໜັງສືຢັ້ງຢືນຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ: 6831/ຍທຂ.ນວ, ລົງວັນທີ 02 ກໍລະກົດ 2024.

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານມາຍັງທ່ານເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດຕໍ່ໄປ.

ຫົວໜ້າພະແນກ

ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ

ຄຳຕັນ ແກ້ວຕາວົງ